ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 632/ລບ
ນະຄອນຫຼວງວຽງຈັນ, ວັນທີ 17/10/25

# ດໍາລັດ
# ວ່າດ້ວຍໜຶ່ງເມືອງ ໜຶ່ງຜະລິດຕະພັນ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 16/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ໜັງສືສະເໜີຂອງກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 1929/ອຄ, ລົງວັນທີ 07 ຕຸລາ 2024.

## ລັດຖະບານ ອອກດໍາລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດໍາລັດສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ ສົ່ງເສີມ, ພັດທະນາ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ໃຫ້ເຕີບໃຫຍ່ເຂັ້ມແຂງ, ປົກປັກຮັກສາມູນເຊື້ອ, ວັດທະນະທໍາ, ສີມື, ຄວາມເປັນເອກະລັກ ທີ່ໂດດເດັ່ນຂອງຜະລິດຕະພັນ, ສົ່ງເສີມຂະບວນການຜະລິດສິນຄ້າ ແລະ ການບໍລິການ ໃຫ້ມີຄວາມຫຼາກຫຼາຍ ພ້ອມທັງປົກປ້ອງສິດ ແລະ ຜົນປະໂຫຍດຂອງ ຜູ້ຜະລິດ, ຜູ້ຊົມໃຊ້ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 2 ໜຶ່ງເມືອງ ໜຶ່ງຜະລິດຕະພັນ**

ໜຶ່ງເມືອງ ໜຶ່ງຜະລິດຕະພັນ ຂຽນເປັນພາສາສາກົນ “One District One Product” ຂຽນຫຍໍ້ວ່າ “ODOP” ຂຽນເປັນພາສາລາວວ່າ “ໂອດອບ” ແມ່ນ ຜະລິດຕະພັນ ທີ່ນໍາໃຊ້ສີມືແຮງງານ, ພູມປັນຍາ, ຫົວຄິດປະດິດສ້າງ ແລະ ຊັບພະຍາກອນພາຍໃນທ້ອງຖິ່ນເປັນຫຼັກ ທີ່ເປັນເອກະລັກຂອງທ້ອງຖິ່ນນັ້ນ ເຂົ້າໃນການຜະລິດ ຊຶ່ງປະກອບມີ ໂອດອບໃນຮູບແບບສິນຄ້າ ແລະ ໂອດອບໃນຮູບແບບການບໍລິການ ທີ່ມີມູນເຊື້ອ, ມີທ່າແຮງ ແລະ ເປັນມໍຣະດົກ ໂດຍບໍ່ຈໍາກັດຈໍານວນ ຜະລິດຕະພັນສິນຄ້າ ແລະ ການບໍລິການ.

ມາດຕາ 3 ການອະທິບາຍຄໍາສັບ

ຄໍາສັບທີ່ນໍາໃຊ້ໃນດໍາລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ຜູ້ປະກອບກິດຈະການໂອດອບ ໝາຍເຖິງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລົງທຶນ, ດໍາເນີນກິດຈະການ ໂອດອບໃນຮູບແບບສິນຄ້າ ແລະ ໂອດອບໃນຮູບແບບການບໍລິການ;

2. ຜະລິດຕະພາບ ໝາຍເຖິງ ປະສິດທິພາບ ແລະ ປະສິດທິຜົນ ຂອງການເຄື່ອນໄຫວ, ດໍາເນີນກິດຈະການ ໂດຍປຽບທຽບ ລະຫວ່າງ ຜົນໄດ້ຮັບ ແລະ ປັດໄຈນໍາເຂົ້າ ໃນການດໍາເນີນກິດຈະການໂອດອບ ເຊັ່ນ ແຮງງານ, ທຶນ, ວັດຖຸດິບ ແລະ ເວລາ.

ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານໂອດອບ

ລັດ ຊຸກຍູ້ ແລະ ສົ່ງເສີມ ວຽກງານໂອດອບ ດ້ວຍການວາງນະໂຍບາຍ, ສ້າງ ກົນໄກ, ສະພາບແວດລ້ອມ ແລະ ສິ່ງອໍານວຍຄວາມສະດວກອື່ນ ໃຫ້ແກ່ການຈັດຕັ້ງປະຕິບັດວຽກງານໂອດອບ ເພື່ອພັດທະນາຜະລິດຕະພັນໂອດອບ ໃຫ້ມີຄວາມຫຼາກຫຼາຍ, ເຂັ້ມແຂງ, ທັນສະໄໝ ຕາມທິດສີຂຽວ ແລະ ຍືນຍົງ.

ລັດ ຊຸກຍູ້ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ມີສ່ວນຮ່ວມ ແລະ ປະກອບສ່ວນ ເຂົ້າໃນການຈັດຕັ້ງປະຕິບັດວຽກງານໂອດອບ.

ລັດ ສົ່ງເສີມ ໃຫ້ມີການລົງທຶນ, ພັດທະນາຕໍ່ຍອດ, ສ້າງມູນຄ່າເພີ່ມ, ການເສີມສ້າງ, ປະດິດສ້າງ ຜະລິດຕະພັນໂອດອບ ໃຫ້ກ້າວໄປສູ່ການຜະລິດເປັນສິນຄ້າ ແລະ ການບໍລິການ ທີ່ມີມາດຕະຖານ, ມີຄຸນນະພາບ ເປັນສິນຄ້າ ແລະ ສາມາດກ້າວໄປສູ່ການສົ່ງອອກ.

ມາດຕາ 5 ຫຼັກການ ກ່ຽວກັບວຽກງານໂອດອບ

ວຽກງານໂອດອບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ໃນແຕ່ລະໄລຍະ;

2. ຮັບປະກັນ ການປົກປັກຮັກສາມູນເຊື້ອ, ວັດທະນະທໍາ, ສີມື, ຄວາມເປັນເອກະລັກ ແລະ ການປະດິດສ້າງ;

3. ຮັບປະກັນຄວາມສະເໝີພາບ, ຄວາມໂປ່ງໃສ, ວ່ອງໄວ, ຍຸຕິທໍາ ແລະ ສາມາດກວດສອບໄດ້;

4. ມີການປະສານສົມທົບກັບ ຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ມາດຕາ 6 ຂອບເຂດການນໍາໃຊ້

ດໍາລັດສະບັບນີ້ ນໍາໃຊ້ ສໍາລັບ ບຸກຄົນ, ກຸ່ມ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນກັບ ວຽກງານໂອດອບ ຢູ່ ສປປ ລາວ.

ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມ ການພົວພັນ, ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບ ວຽກງານໂອດອບ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນ ຂ່າວສານ, ການຄົ້ນຄວ້າວິທະຍາສາດ, ເຕັກນິກ, ເຕັກໂນໂລຊີ, ການພັດທະນາບຸກຄະລາກອນ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ຂະຫຍາຍຕົວ, ເຂັ້ມແຂງ, ທັນສະໄໝ ແລະ ປະຕິບັດຕາມສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ໝວດທີ 2
## ຮູບແບບໂອດອບ

**ມາດຕາ 8 ຮູບແບບໂອດອບ**

ຮູບແບບໂອດອບ ມີ ດັ່ງນີ້:

1. ໂອດອບໃນຮູບແບບສິນຄ້າ;
2. ໂອດອບໃນຮູບແບບການບໍລິການ.

**ມາດຕາ 9 ໂອດອບໃນຮູບແບບສິນຄ້າ**

ໂອດອບໃນຮູບແບບສິນຄ້າ ແມ່ນ ສິນຄ້າທີ່ຜ່ານຂະບວນການຜະລິດ, ປຸງແຕ່ງ ໂດຍນຳໃຊ້ແຮງງານ, ຫົວຄິດປະດິດສ້າງ, ພູມປັນຍາ ແລະ ຊັບພະຍາກອນພາຍໃນທ້ອງຖິ່ນ ທີ່ ເປັນເອກະລັກໂດດເດັ່ນ, ເປັນມູນເຊື້ອມາຍາວນານ, ທີ່ສາມາດຈັບຂາຍໄດ້ ເປັນຕົ້ນ ສິນຄ້າຫັດຖະກຳ, ອາຫານ ແລະ ເຄື່ອງດື່ມ, ຢາພື້ນເມືອງ, ເຄື່ອງສຳອາງ.

ໂອດອບໃນຮູບແບບສິນຄ້າ ມີ ເງື່ອນໄຂ ດັ່ງນີ້:

1. ຜະລິດໂດຍ ບຸກຄົນ, ກຸ່ມ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນປະເທດ;
2. ນຳໃຊ້ວັດຖຸດິບພາຍໃນເຂົ້າໃນການຜະລິດ ທີ່ກວມເອົາ ເຈັດສິບສ່ວນຮ້ອຍ (70%) ຂຶ້ນໄປ ແລະ ມີແຫຼ່ງວັດຖຸດິບທີ່ໝັ້ນຄົງ;
3. ເປັນຊັບສິນທາງປັນຍາຂອງຜູ້ຜະລິດ, ມີຂະບວນການ ຜະລິດ, ປຸງແຕ່ງ, ຫຸ້ມຫໍ່ ແລະ ມີກາໝາຍສິນຄ້າຂອງຕົນ;
4. ມີສະຖານທີ່ ທີ່ໄດ້ມາດຕະຖານ;
5. ການຜະລິດ ແລະ ອອກແບບສິນຄ້າ ມີຄວາມເປັນເອກະລັກສະເພາະ ໂດດເດັ່ນ ຕິດພັນກັບມູນເຊື້ອ, ວັດທະນະທຳ ແລະ ຮີດຄອງປະເພນີ ຂອງ ຊາດ, ເຜົ່າ, ທ້ອງຖິ່ນ ແລະ ຊຸມຊົນ;
6. ເປັນສິນຄ້າ ທີ່ດຳເນີນການຜະລິດຖືກຕ້ອງ ຕາມກົດໝາຍ, ມາດຕະຖານ ແລະ ລະບຽບການທີ່ກ່ຽວຂ້ອງ ໂດຍຮັບປະກັນຄວາມປອດໄພທາງດ້ານສຸຂະພາບ, ຊີວິດ, ຊັບສິນ ແລະ ຜົນປະໂຫຍດຂອງຜູ້ຊົມໃຊ້, ມີຄວາມຍືນຍົງ ແລະ ມີຜົນກະທົບຕໍ່ສິ່ງແວດລ້ອມໜ້ອຍທີ່ສຸດ.

**ມາດຕາ 10 ໂອດອບໃນຮູບແບບການບໍລິການ**

ໂອດອບໃນຮູບແບບການບໍລິການ ແມ່ນ ສິນຄ້າໃນຮູບແບບໃຫ້ບໍລິການ, ວິທີການຕົບແຕ່ງສະຖານທີ່ໃຫ້ບໍລິການ ຫຼື ລະບົບວິທີການໃຫ້ບໍລິການ, ແບບແຜນວິຖີການດຳລົງຊີວິດທີ່ໂດດເດັ່ນ, ເປັນທີ່ຮູ້ຈັກ ຂອງທ້ອງຖິ່ນ, ຂອງຊາດ ທີ່ເປັນເອກະລັກ, ເປັນມູນເຊື້ອ ທີ່ສ່ອງແສງເຖິງ ສິລະປະ, ວັດທະນະທຳ, ຮີດຄອງປະເພນີໃນສະຖານທີ່ທ່ອງທ່ຽວທີ່ເປັນມໍຣະດົກ ເປັນຕົ້ນ ຫໍພະແກ້ວ, ທົ່ງໄຫຫີນ, ບ້ານທ່ອງທ່ຽວທາງດ້ານວັດທະນະທຳ, ສວນພຶກສາ.

ໂອດອບໃນຮູບແບບການບໍລິການ ມີ ເງື່ອນໄຂ ດັ່ງນີ້:

1. ໃຫ້ບໍລິການໂດຍ ບຸກຄົນ, ກຸ່ມ, ນິຕິບຸກຄົນ ຫຼື ການຈັດຕັ້ງ ພາຍໃນປະເທດ;
2. ເປັນວັດທະນະທຳຂອງລາວ, ຊັບສິນທາງປັນຍາຂອງ ຜູ້ປະດິດສ້າງ ແລະ ຜູ້ປະດິດຄິດແຕ່ງ;
3. ນຳໃຊ້ວັດຖຸດິບພາຍໃນເຂົ້າໃນການຕົບແຕ່ງ ຫຼື ໃຫ້ບໍລິການ ທີ່ກວມເອົາ ເຈັດສິບສ່ວນຮ້ອຍ (70%) ຂຶ້ນໄປ;
4. ວິທີການຕົບແຕ່ງ, ຮູບແບບ, ລວດລາຍ ຫຼື ການໃຫ້ບໍລິການ ທີ່ເປັນເອກະລັກຂອງລາວ;
5. ໃຫ້ການບໍລິການຖືກຕ້ອງ ຕາມກົດໝາຍ, ມາດຕະຖານ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 3
## ກາໝາຍໂອດອບ

### ມາດຕາ 11 ກາໝາຍໂອດອບ

ກາໝາຍໂອດອບ ເປັນຮູບຈັດຕຸລັດ ປະກອບດ້ວຍ ເລກໜຶ່ງລາວ ແລະ ຕົວໜັງສືຂຽນວ່າ ໜຶ່ງເມືອງ ໜຶ່ງຜະລິດຕະພັນ ແລະ One District One Product ຢູ່ເບື້ອງລຸ່ມ ເປັນສີມໍລະກົດ, ໃນເລກໜຶ່ງລາວ ມີລວດລາຍສີເທົາ, ມີຕົວໜັງສື ODOP ສີຂາວ ຢູ່ເບື້ອງເທິງ. ສໍາລັບຂະໜາດກາໝາຍໂອດອບ ຂຶ້ນກັບລັກສະນະ ແລະ ຂະໜາດຂອງຜະລິດຕະພັນ.

ເລກໜຶ່ງລາວ (໑) ສ່ອງແສງໃຫ້ເຫັນຂະບວນການຜະລິດສິນຄ້າ ແລະ ຮູບແບບການບໍລິການ ທີ່ເປັນມູນເຊື້ອ, ມີທ່າແຮງ, ມີຄວາມເປັນເອກະລັກສະເພາະ ໂອດອບ ຢູ່ ສປປ ລາວ ແລະ ຍັງມີຄວາມໝາຍວ່າ ເປັນວຽກບຸລິມະສິດຂອງລັດຖະບານ ໃນການແກ້ໄຂຄວາມທຸກຍາກ, ການສ້າງວຽກເຮັດງານທໍາ ແລະ ສ້າງລາຍໄດ້ໃຫ້ປະຊາຊົນ ບົນພື້ນຖານການນໍາໃຊ້ພູມປັນຍາທ້ອງຖິ່ນ ແລະ ທ່າແຮງຂອງທ້ອງຖິ່ນ.

ລວດລາຍໃນເລກໜຶ່ງລາວ ສ່ອງແສງໃຫ້ເຫັນຄວາມປານີດ, ສີມື ແລະ ພູມປັນຍາ.

ສີຂອງກາໝາຍ ແມ່ນສີມໍລະກົດ ຊຶ່ງເປັນສີແຫ່ງສັນຍາລັກຂອງການພັດທະນາເສດຖະກິດ, ການຄ້າ.

### ມາດຕາ 12 ການນໍາໃຊ້ ກາໝາຍໂອດອບ

ກາໝາຍໂອດອບ ນໍາໃຊ້ ດັ່ງນີ້:

1. ຕິດໃສ່ ຜະລິດຕະພັນສິນຄ້າ ຫຼື ສະຖານທີ່ໃຫ້ບໍລິການ;
2. ຕິດ ຫຼື ພິມໃສ່ ເສື້ອ, ຜ້າ, ເອກະສານ, ສິ່ງພິມ, ສະຖານທີ່ຜະລິດ, ສະຖານທີ່ຈັດກິດຈະກໍາ, ສູນຈໍາໜ່າຍສິນຄ້າ, ງານວາງສະແດງສິນຄ້າ ແລະ ຜະລິດຕະພັນອື່ນ ເພື່ອເຜີຍແຜ່, ໂຄສະນາ ແລະ ສ້າງພາບພົດທີ່ດີ ໃຫ້ແກ່ຂະບວນການສົ່ງເສີມໂອດອບ;
3. ໃຊ້ໃນກິດຈະກໍາອື່ນ ທີ່ເປັນການສົ່ງເສີມໂອດອບ.

### ມາດຕາ 13 ການສະເໜີອະນຸຍາດຂໍນໍາໃຊ້ກາໝາຍໂອດອບ

ບຸກຄົນ, ກຸ່ມ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຂໍອະນຸຍາດນໍາໃຊ້ກາໝາຍໂອດອບ ໃຫ້ຍື່ນຄໍາຮ້ອງພ້ອມດ້ວຍເອກະສານປະກອບ ຕໍ່ຫ້ອງການອຸດສາຫະກໍາ ແລະ ການຄ້າ ຂັ້ນເມືອງ ບ່ອນທີ່ຜະລິດຜະລິດຕະພັນ ຂຶ້ນກັບ.

### ມາດຕາ 14 ເອກະສານປະກອບ ການຂໍອະນຸຍາດ

ເອກະສານປະກອບການຂໍອະນຸຍາດ ມີ ດັ່ງນີ້:

1. ໃບຄໍາຮ້ອງ ຕາມແບບພິມ ທີ່ກະຊວງອຸດສາຫະກໍາ ແລະ ການຄ້າ ກໍານົດ;
2. ສໍາເນົາໃບອະນຸຍາດສ້າງຕັ້ງ ກຸ່ມ (ຖ້າມີ);
3. ສໍາເນົາໃບອະນຸຍາດດໍາເນີນທຸລະກິດ, ໃບທະບຽນວິສາຫະກິດ ຫຼື ໃບທະບຽນສະຫະກອນ (ຖ້າມີ);
4. ສໍາເນົາໃບວິໄຈຄຸນນະພາບ ຫຼື ໃບຢັ້ງຢືນການຂຶ້ນທະບຽນ ອຢ ຫຼື ໃບຢັ້ງຢືນສຸຂານາໄມ ກໍລະນີເປັນຜະລິດຕະພັນປະເພດ ອາຫານ ແລະ ເຄື່ອງດື່ມ, ຢາພື້ນເມືອງ, ເຄື່ອງສໍາອາງ ແລະ ຜະລິດຕະພັນອື່ນ;
5. ສໍາເນົາໃບຢັ້ງຢືນ ມາດຕະຖານ, ຄຸນນະພາບອື່ນ ທີ່ອອກໃຫ້ໂດຍຂະແໜງການທີ່ກ່ຽວຂ້ອງ (ຖ້າມີ);
6. ຮູບພາບ ຫຼື ຕົວຢ່າງ ຜະລິດຕະພັນສິນຄ້າ;
7. ເອກະສານອື່ນ ທີ່ເຫັນວ່າມີຄວາມຈໍາເປັນ.

ສໍາລັບການຮ້ອງຂໍຂອງບຸກຄົນ ໃຫ້ຍົກເວັ້ນເອກະສານປະກອບ ຂໍ້ 2 ແລະ ຂໍ້ 3 ຂອງມາດຕານີ້.

ມາດຕາ 15 ຂັ້ນຕອນການພິຈາລະນາອະນຸຍາດໃຫ້ນຳໃຊ້ກາໝາຍໂອດອບ

ຂັ້ນຕອນການພິຈາລະນາອະນຸຍາດໃຫ້ນຳໃຊ້ກາໝາຍໂອດອບ ມີ ດັ່ງນີ້:

1. ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ໄດ້ຮັບເອກະສານຄຳຮ້ອງ ແລ້ວ ໃຫ້ນຳສະເໜີຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ ພິຈາລະນາ. ພາຍຫຼັງຄະນະກຳມະການຮັບຮອງແລ້ວ ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ຕ້ອງອອກໃບຢັ້ງຢືນຮັບຮອງຜະລິດຕະພັນ ພາຍໃນ ສິບວັນ;

2. ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ນຳສົ່ງສຳນວນເອກະສານ ພ້ອມໃບຢັ້ງຢືນຮັບຮອງຜະລິດຕະພັນ ໄປຍັງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ເພື່ອສະເໜີຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ ພິຈາລະນາ. ພາຍຫຼັງຄະນະກຳມະການຮັບຮອງແລ້ວ ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ຕ້ອງອອກໃບຢັ້ງຢືນຮັບຮອງຜະລິດຕະພັນ ພາຍໃນກຳນົດເວລາ ສິບວັນ;

3. ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ນຳສົ່ງສຳນວນເອກະສານ ພ້ອມໃບຢັ້ງຢືນຮັບຮອງຜະລິດຕະພັນ ໄປຍັງກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາອອກໃບອະນຸຍາດນຳໃຊ້ກາໝາຍໂອດອບ. ພາຍຫຼັງຄະນະກຳມະການຮັບຮອງແລ້ວ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງອອກໃບອະນຸຍາດນຳໃຊ້ກາໝາຍໂອດອບ ພາຍໃນກຳນົດເວລາ ຫ້າວັນ.

ໃນກໍລະນີ ບໍ່ສາມາດອອກໃບຢັ້ງຢືນຮັບຮອງຜະລິດຕະພັນ ຫຼື ໃບອະນຸຍາດນຳໃຊ້ກາໝາຍໂອດອບພາຍໃນກຳນົດເວລາດັ່ງກ່າວ ໃຫ້ຂະແໜງການອຸດສາຫະກຳ ແລະ ການຄ້າ ແຈ້ງເຫດຜົນ ເປັນລາຍລັກອັກສອນໃຫ້ຜູ້ຮ້ອງຂໍຊາບ.

ມາດຕາ 16 ອາຍຸການນຳໃຊ້ກາໝາຍໂອດອບ

ກາໝາຍໂອດອບ ມີອາຍຸການນຳໃຊ້ ສາມປີ ແລະ ສາມາດຕໍ່ໄດ້.

ການຂໍຕໍ່ໃບອະນຸຍາດກາໝາຍໂອດອບ ຕ້ອງດຳເນີນກ່ອນວັນໝົດອາຍຸການນຳໃຊ້ ສາມເດືອນ ໂດຍໃຫ້ຍື່ນຄຳຮ້ອງຂໍ ຕໍ່ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ເພື່ອພິຈາລະນາ ຕາມລະບຽບການ.

ມາດຕາ 17 ການໂຈະການນຳໃຊ້ກາໝາຍໂອດອບ

ການນຳໃຊ້ກາໝາຍໂອດອບ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີຂອງຜູ້ໄດ້ຮັບອະນຸຍາດໃຫ້ນຳໃຊ້ກາໝາຍໂອດອບ;

2. ດຳເນີນການຜະລິດ ຫຼື ໃຫ້ການບໍລິການ ບໍ່ຖືກຕ້ອງ ຕາມເງື່ອນໄຂ ທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ການໂຈະການນຳໃຊ້ກາໝາຍໂອດອບ ຕ້ອງມີກຳນົດເວລາອັນແນ່ນອນ ເພື່ອໃຫ້ຜູ້ໄດ້ຮັບໃບຢັ້ງຢືນໂອດອບປັບປຸງ ແລະ ແກ້ໄຂ.

ມາດຕາ 18 ການຖອນ ກາໝາຍໂອດອບ

ກາໝາຍໂອດອບ ຈະຖືກຖອນ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີຂອງຜູ້ໄດ້ຮັບອະນຸຍາດໃຫ້ນຳໃຊ້ກາໝາຍໂອດອບ;

2. ບໍ່ປະຕິບັດຕາມການແຈ້ງໂຈະ;

3. ເອົາກາໝາຍໂອດອບໃຫ້ຜູ້ອື່ນນຳໃຊ້;

4. ມີການລະເມີດກົດໝາຍ ແລະ ລະບຽບການ ຢ່າງຮ້າຍແຮງ.

ເມື່ອມີການຖອນກາໝາຍໂອດອບ ກະຊວງອຸດສາຫະກຳ ແລະ ການຄ້າ ຕ້ອງແຈ້ງ ກ່ຽວກັບການຖອນດັ່ງກ່າວ ພ້ອມດ້ວຍເຫດຜົນ ເປັນລາຍລັກອັກສອນ ໃຫ້ຜູ້ໄດ້ຮັບກາໝາຍ ພ້ອມທັງແຈ້ງໃຫ້ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງຊາບ.

## ໝວດທີ 4
## ລະດັບໂອດອບ

### ມາດຕາ 19 ລະດັບໂອດອບ

ລະດັບໂອດອບ ເປັນຮູບດາວ ທີ່ມີຄຸນຄ່າສະເພາະຂອງຂະແໜງການອຸດສາຫະກຳ ແລະ ການຄ້າ ທີ່ມອບໃຫ້ຜະລິດຕະພັນໂອດອບ ໂດຍຜ່ານຂະບວນການຄັດເລືອກຕາມມາດຕະຖານ ເພື່ອສ້າງມູນຄ່າເພີ່ມ, ຢັ້ງຢືນຄຸນນະພາບໂອດອບ ໃຫ້ແກ່ຜະລິດຕະພັນ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ຊົມໃຊ້. ລະດັບໂອດອບ ມີລະດັບ ໜຶ່ງດາວ ຫາ ຫ້າດາວ.

ສຳລັບຮູບແບບ, ຂັ້ນຕອນ ແລະ ວິທີການ ຄັດເລືອກປະດັບດາວ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

### ມາດຕາ 20 ການຈັດລະດັບໂອດອບ

ການຈັດລະດັບໂອດອບ ແມ່ນ ການຄັດເລືອກຜະລິດຕະພັນ ໂດຍໃຊ້ຫຼັກການໃຫ້ຄະແນນ ແຕ່ລະຜະລິດຕະພັນໂອດອບ ຊຶ່ງມີຄະແນນລວມ 100 ຄະແນນ, ໂດຍປະກອບມີ ຫ້າ ລະດັບ ດັ່ງນີ້:

1. ລະດັບ ຫ້າດາວ ມີ 90-100 ຄະແນນ ຊຶ່ງແມ່ນ ຜະລິດຕະພັນ ທີ່ມີຄຸນນະພາບ, ໄດ້ມາດຕະຖານໃນລະດັບດີເລີດ, ເປັນທີ່ຍອມຮັບຂອງຕະຫຼາດພາຍໃນ ແລະ ຕ່າງປະເທດ;
2. ລະດັບ ສີ່ດາວ ມີ 70-89 ຄະແນນ ຊຶ່ງແມ່ນ ຜະລິດຕະພັນ ທີ່ມີຄຸນນະພາບ, ໄດ້ມາດຕະຖານ ໃນລະດັບດີ ແລະ ສາມາດສົ່ງອອກ;
3. ລະດັບ ສາມດາວ ມີ 50-69 ຄະແນນ ຊຶ່ງແມ່ນ ຜະລິດຕະພັນ ທີ່ມີຄຸນນະພາບ, ໄດ້ມາດຕະຖານໃນລະດັບປານກາງ ແລະ ສາມາດພັດທະນາສູ່ລະດັບ ສີ່ ດາວ;
4. ລະດັບ ສອງດາວ ມີ 30-49 ຄະແນນ ຊຶ່ງແມ່ນ ຜະລິດຕະພັນ ທີ່ມີຄຸນນະພາບ, ໄດ້ມາດຕະຖານໃນລະດັບໜຶ່ງທີ່ແນ່ນອນ, ສາມາດພັດທະນາສູ່ລະດັບ ສາມດາວ;
5. ລະດັບ ໜຶ່ງດາວ ມີ 29 ຄະແນນ ລົງມາ ຊຶ່ງແມ່ນ ຜະລິດຕະພັນ ທີ່ຍັງມີຈຸດຕ້ອງປັບປຸງຫຼາຍດ້ານ.

### ມາດຕາ 21 ອົງການລັດທີ່ມີສິດອອກໃບຢັ້ງຢືນ ລະດັບໂອດອບ ແລະ ດາວ

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ພິຈາລະນາ ອອກໃບຢັ້ງຢືນ ລະດັບໂອດອບ ແລະ ດາວລະດັບ ຫ້າດາວ ແລະ ສີ່ດາວ.

ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ເປັນຜູ້ພິຈາລະນາ ອອກໃບຢັ້ງຢືນ ລະດັບໂອດອບແລະ ດາວ ລະດັບ ສາມດາວ ແລະ ສອງດາວ.

ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ເປັນຜູ້ພິຈາລະນາ ອອກໃບຢັ້ງຢືນ ລະດັບໂອດອບແລະ ດາວ ລະດັບ ໜຶ່ງດາວ.

## ໝວດທີ 5
## ການສົ່ງເສີມໂອດອບ

### ມາດຕາ 22 ການສົ່ງເສີມໂອດອບ

ການສົ່ງເສີມໂອດອບ ປະກອບດ້ວຍ:

1. ການສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ;
2. ການເຂົ້າເຖິງແຫຼ່ງທຶນ;
3. ການເຂົ້າເຖິງວັດຖຸດິບຮັບໃຊ້ການຜະລິດ;

4. ການໃຫ້ນະໂຍບາຍດ້ານ ພາສີ ແລະ ອາກອນ;
5. ການສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ;
6. ການບໍລິການ ດ້ານວິຊາການ ແລະ ໃຫ້ຄໍາປຶກສາ;
7. ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ;
8. ການນໍາໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ;
9. ການນໍາໃຊ້ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ;
10. ການສະໜອງ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ.

### ມາດຕາ 23 ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງເອົາໃຈໃສ່ຕໍ່ການສ້າງສະພາບແວດລ້ອມທີ່ເອື້ອອໍານວຍ ດ້ວຍການ ສ້າງ ແລະ ປັບປຸງ ລະບຽບການ, ກົນໄກ ໃຫ້ມີຄວາມຈະແຈ້ງ ແລະ ຮັດກຸມ ເພື່ອອໍານວຍຄວາມສະດວກໃຫ້ແກ່ການ ສ້າງ, ດໍາເນີນ ແລະ ພັດທະນາທຸລະກິດ, ພ້ອມທັງ ແກ້ໄຂບັນຫາ ທີ່ເປັນການກີດໜ່ວງການພັດທະນາຂອງຜູ້ປະກອບກິດຈະການໂອດອບ ເພື່ອຫຼຸດຜ່ອນຕົ້ນທຶນ, ເວລາ ແລະ ຍົກສູງປະສິດທິພາບ, ປະສິດທິຜົນຂອງການຜະລິດ.

### ມາດຕາ 24 ການເຂົ້າເຖິງແຫຼ່ງທຶນ

ກະຊວງອຸດສາຫະກໍາ ແລະ ການຄ້າ, ກະຊວງການເງິນ, ທະນາຄານແຫ່ງ ສປປ ລາວ, ກະຊວງກະສິກໍາ ແລະ ສິ່ງແວດລ້ອມ, ກະຊວງສາທາລະນະສຸກ, ກະຊວງວັດທະນະທໍາ ແລະ ການທ່ອງທ່ຽວ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສົມທົບກັບ ທະນາຄານທຸລະກິດ, ສະຖາບັນການເງິນ ແລະ ຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າ ຊອກຫາແຫຼ່ງທຶນ ຫຼື ສ້າງເງື່ອນໄຂໃຫ້ ຜູ້ຜະລິດ, ຜູ້ບໍລິການໂອດອບ ສາມາດເຂົ້າເຖິງແຫຼ່ງທຶນ.

ທະນາຄານ ແຫ່ງ ສປປ ລາວ ຄົ້ນຄວ້າ ແລະ ກໍານົດມາດຕະການ, ລະບຽບການຕ່າງໆ ເພື່ອຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂ ໃຫ້ທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນ ອອກຜະລິດຕະພັນດ້ານການເງິນຫຼາຍປະເພດໃນການສະໜອງສິນເຊື່ອ ເຊັ່ນ ການຄໍ້າປະກັນສິນເຊື່ອ, ການເຊົ່າສິນເຊື່ອ, ການຮ່ວມລົງທຶນ ແລະ ອື່ນໆ ເພື່ອຮັບປະກັນໃຫ້ຜູ້ປະກອບກິດຈະການໂອດອບ ສາມາດເຂົ້າເຖິງແຫຼ່ງທຶນໄດ້ຢ່າງສະດວກ, ວ່ອງໄວ, ກວ້າງຂວາງ ແລະ ທົ່ວເຖິງ.

### ມາດຕາ 25 ການເຂົ້າເຖິງວັດຖຸດິບຮັບໃຊ້ການຜະລິດ

ຂະແໜງການອຸດສາຫະກໍາ ແລະ ການຄ້າ, ຂະແໜງການກະສິກໍາ ແລະ ສິ່ງແວດລ້ອມ, ຂະແໜງການສາທາລະນະສຸກ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ສົ່ງເສີມ ແລະ ສ້າງເງື່ອນໄຂອໍານວຍຄວາມສະດວກ ໃຫ້ແກ່ການເຂົ້າເຖິງວັດຖຸດິບ ເພື່ອນໍາໃຊ້ເຂົ້າໃນການ ຜະລິດ, ປຸງແຕ່ງ, ແປຮູບ ເປັນສິນຄ້າໂອດອບ ເພື່ອຫຼຸດຜ່ອນຕົ້ນທຶນ, ຍົກສູງປະສິດທິພາບຂອງການຜະລິດ.

### ມາດຕາ 26 ໃຫ້ນະໂຍບາຍດ້ານ ພາສີ, ອາກອນ ແລະ ຄ່າທໍານຽມ

ລັດ ໃຫ້ນະໂຍບາຍສົ່ງເສີມດ້ານພາສີ, ອາກອນ ແລະ ຄ່າທໍານຽມ ໃຫ້ຜູ້ປະກອບກິດຈະການ ໂອດອບ ດັ່ງນີ້:

1. ໄດ້ຮັບນະໂຍບາຍ ຍົກເວັ້ນການເກັບຄ່າທໍານຽມ ແລະ ຄ່າບໍລິການອອກໃບອະນຸຍາດນໍາໃຊ້ກາໝາຍໂອດອບ, ສ່ວນການຕໍ່ໃບອະນຸຍາດນໍາໃຊ້ກາໝາຍໂອດອບ ໃຫ້ເສຍຄ່າທໍານຽມ ແລະ ຄ່າບໍລິການຕາມລະບຽບການ;

2. ໄດ້ຮັບນະໂຍບາຍຍົກເວັ້ນອາກອນກຳໄລ ຈາກການດຳເນີນກິດຈະການ ນັບແຕ່ວັນທີ່ໄດ້ຮັບໃບອະນຸຍາດນຳໃຊ້ກາໝາຍໂອດອບ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ດັ່ງນີ້:

- ການລົງທຶນໂອດອບ ຢູ່ ເຂດ 1: ຈະໄດ້ຮັບການຍົກເວັ້ນໃນໄລຍະສູງສຸດບໍ່ເກີນ 15 ປີ;
- ການລົງທຶນໂອດອບ ຢູ່ ເຂດ 2: ຈະໄດ້ຮັບການຍົກເວັ້ນໃນໄລຍະສູງສຸດບໍ່ເກີນ 7 ປີ.

ພາຍຫຼັງສິ້ນສຸດໄລຍະການຍົກເວັ້ນ ຈະໄດ້ເສຍອາກອນກຳໄລ ຕາມທີ່ກຳນົດໄວ້ໃນ ກົດໝາຍວ່າດ້ວຍອາກອນລາຍໄດ້.

3. ໄດ້ຮັບນະໂຍບາຍຍົກເວັ້ນການເກັບຄ່າເຊົ່າ ແລະ ຄ່າສຳປະທານທີ່ດິນຂອງລັດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ດັ່ງນີ້:

- ການລົງທຶນໂອດອບ ຢູ່ ເຂດ 1: ຈະໄດ້ຮັບການຍົກເວັ້ນໃນໄລຍະສູງສຸດ ບໍ່ເກີນ 15 ປີ;
- ການລົງທຶນໂອດອບ ຢູ່ ເຂດ 2: ຈະໄດ້ຮັບການຍົກເວັ້ນໃນໄລຍະສູງສຸດ ບໍ່ເກີນ 8 ປີ.

4. ໄດ້ຮັບນະໂຍບາຍຍົກເວັ້ນພາສີນຳເຂົ້າ ອຸປະກອນ, ເຄື່ອງມື ແລະ ພາຫະນະເຄື່ອງກົນຈັກ ທີ່ບໍ່ສາມາດສະໜອງໄດ້ພາຍໃນປະເທດ ເພື່ອສ້າງເປັນຊັບສິນບັດຄົງທີ່ ແລະ ຮັບໃຊ້ການຜະລິດ ຈຳໜ່າຍພາຍໃນ ທົດແທນການນຳເຂົ້າ ແລະ ຜະລິດເພື່ອສົ່ງອອກ;

5. ໄດ້ຮັບນະໂຍບາຍຍົກເວັ້ນພາສີຂາອອກ ຜະລິດຕະພັນໂອດອບ ທີ່ຜ່ານຂະບວນການປູກ, ລ້ຽງ, ຜະລິດ ຫຼື ປຸງແຕ່ງ ແປຮູບ ເປັນຜະລິດຕະພັນສຳເລັດຮູບ, ຢາພື້ນເມືອງ, ອາຫານ ແລະ ເຄື່ອງດື່ມ, ຫັດຖະກຳ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍພາສີ;

6. ໄດ້ຮັບນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ມາດຕາ 27 ການສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ

ລັດ ສົ່ງເສີມການສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ ດັ່ງນີ້:

1. ສົ່ງເສີມພາກສ່ວນຕ່າງໆ ສ້າງສູນຝຶກ ແລະ ຝຶກອົບຮົມ ເພື່ອສ້າງ ແລະ ພັດທະນາ ຜູ້ປະກອບກິດຈະການ;
2. ສົ່ງເສີມສະຖາບັນ, ໂຮງຮຽນ, ວິທະຍາໄລ ສ້າງຫຼັກສູດ ກ່ຽວກັບ ການອອກແບບ, ການປຸງແຕ່ງ, ແປຮູບ, ການຫຸ້ມຫໍ່, ການສ້າງຍີ່ຫໍ້ ເພື່ອພັດທະນາຜະລິດຕະພັນ ໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບ;
3. ໃຫ້ການໃກ້ຊິດຕິດແທດ, ຕິດຕາມ, ຊຸກຍູ້ສົ່ງເສີມ ແລະ ສ້າງເງື່ອນໄຂ ທີ່ກະຕຸ້ນໃຫ້ເກີດມີຜູ້ປະກອບກິດຈະການໂອດອບໃໝ່;
4. ໃຫ້ການຊ່ວຍເຫຼືອຜູ້ປະກອບກິດຈະການໃນການພັດທະນາ, ສ້າງຄວາມເຂັ້ມແຂງໃຫ້ຕົນເອງ ດ້ວຍການຈັດຝຶກອົບຮົມ, ສະໜອງທຶນສົມທົບ ຫຼື ສ້າງເງື່ອນໄຂ ໃຫ້ໄດ້ເຂົ້າຮ່ວມການຍົກລະດັບຄວາມຮູ້ ຢູ່ ພາຍໃນ ແລະ ຕ່າງປະເທດ;
5. ສົ່ງເສີມການຈັດກິດຈະກຳ ກ່ຽວກັບ ການສ້າງຜູ້ປະກອບກິດຈະການໂອດອບ ເຊັ່ນ ການປະກວດຄັດເລືອກຜະລິດຕະພັນ ເພື່ອປະດັບດາວນາມມະຍົດ, ການປະກວດອອກແບບຜະລິດຕະພັນລາວດີເດັ່ນ, ການຍ້ອງຍໍຜູ້ປະກອບກິດຈະການດີເດັ່ນ ແລະ ກິດຈະກຳສົ່ງເສີມອື່ນ.

## ມາດຕາ 28 ການບໍລິການ ດ້ານວິຊາການ ແລະ ໃຫ້ຄຳປຶກສາ

ຂະແໜງການທີ່ກ່ຽວຂ້ອງ ເປັນເຈົ້າການໃນການບໍລິການ ດ້ານວິຊາການ ແລະ ໃຫ້ຄຳປຶກສາແກ່ຜູ້ປະກອບກິດຈະການໂອດອບ ດ້ວຍການສ້າງຊ່ຽວຊານສະເພາະດ້ານ ເພື່ອເຄື່ອນໄຫວໃຫ້ບໍລິການດ້ານວິຊາການ ແລະ ໃຫ້ຄຳປຶກສາ ແນ່ໃສ່ພັດທະນາຜູ້ປະກອບກິດຈະການໂອດອບ ໃຫ້ເຕີບໃຫຍ່ເຂັ້ມແຂງ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂ ແລະ ກົນໄກ ໃນການໃຫ້ການບໍລິການ ດ້ານວິຊາການ ແລະ ໃຫ້ຄໍາປຶກສາ ແກ່ຜູ້ປະກອບກິດຈະການໂອດອບ ຕາມພາລະບົດບາດຂອງຕົນ, ພ້ອມທັງຊຸກຍູ້ພາກສ່ວນຕ່າງໆ ໃຫ້ການບໍລິການດ້ານວິຊາການ ແລະ ໃຫ້ຄໍາປຶກສາ ແກ່ຜູ້ປະກອບກິດຈະການ.

### ມາດຕາ 29 ການເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ

ຂະແໜງການອຸດສາຫະກໍາ ແລະ ການຄ້າ ປະສານສົມທົບກັບຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃຫ້ການສະໜັບສະໜູນ ຜູ້ປະກອບກິດຈະການໂອດອບ ເພື່ອໃຫ້ສາມາດເຂົ້າເຖິງ ແລະ ຂະຫຍາຍຕະຫຼາດ ດ້ວຍການຈັດງານວາງສະແດງສິນຄ້າ ແລະ ການບໍລິການ, ການໂຄສະນາສິນຄ້າ, ການສຶກສາກ່ຽວກັບຕະຫຼາດ, ການແນະນໍາຜະລິດຕະພັນ ແລະ ເຂົ້າຮ່ວມງານວາງສະແດງສິນຄ້າ ທັງພາຍໃນ ແລະ ຕ່າງປະເທດ, ການຈັບຄູ່ທຸລະກິດ ແລະ ການຮ່ວມລົງທຶນ ເພື່ອຂະຫຍາຍຕະຫຼາດ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ສ້າງເງື່ອນໄຂ ແລະ ໃຫ້ໂອກາດ ຜູ້ປະກອບກິດຈະການໂອດອບ ເປັນຜູ້ ສະໜອງສິນຄ້າ ແລະ ການບໍລິການ.

### ມາດຕາ 30 ການນໍາໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ

ລັດ ສົ່ງເສີມຜູ້ປະກອບກິດຈະການໂອດອບ ນໍາໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ ດັ່ງນີ້:

1. ຊຸກຍູ້, ສົ່ງເສີມ ຜູ້ປະກອບກິດຈະການໂອດອບ ຄົ້ນຄວ້າ ແລະ ນໍາໃຊ້ເຕັກໂນໂລຊີທີ່ກ້າວໜ້າ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເຂົ້າໃນການຜະລິດສິນຄ້າ, ການອອກແບບການຫຸ້ມ, ການຕະຫຼາດ ແລະ ການບໍລິການ;
2. ສະໜອງທຶນໃນຮູບແບບຕ່າງໆ ໃຫ້ຜູ້ປະກອບກິດຈະການໂອດອບ ນໍາໃຊ້ເຂົ້າໃນການຈັດຊື້ ແລະ ປັບປຸງເຕັກໂນໂລຊີ ໃຫ້ທັນສະໄໝ ແລະ ແທດເໝາະກັບການດໍາເນີນທຸລະກິດ;
3. ຊຸກຍູ້, ສົ່ງເສີມສະຖາບັນຄົ້ນຄວ້າ, ສະຖາບັນການສຶກສາ, ອົງກອນ ແລະ ພາກທຸລະກິດ ຄົ້ນຄວ້າ, ວິໄຈ ແລະ ພັດທະນາເຕັກໂນໂລຊີ ທີ່ທັນສະໄໝ ແລະ ເປັນມິດຕໍ່ສິ່ງແວດລ້ອມ ເພື່ອຖ່າຍທອດໃຫ້ຜູ້ປະກອບກິດຈະການໂອດອບ ນໍາໃຊ້ເຂົ້າໃນການດໍາເນີນການຜະລິດສິນຄ້າ, ການອອກແບບຫຸ້ມຫໍ່, ການຕະຫຼາດ ແລະ ການບໍລິການ ໃຫ້ມີຜະລິດຕະພາບ ແລະ ຄຸນນະພາບສູງຂຶ້ນ.

### ມາດຕາ 31 ການນໍາໃຊ້ ແລະ ການປົກປ້ອງສິດທາງດ້ານຊັບສິນທາງປັນຍາ

ຂະແໜງການອຸດສາຫະກໍາ ແລະ ການຄ້າ, ຂະແໜງການອື່ນ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ສົ່ງເສີມ ແລະ ສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການປົກປ້ອງ, ການປະດິດສ້າງ, ປະດິດຄິດແຕ່ງ ຜະລິດຕະພັນໂອດອບ ໂດຍສະເພາະ ການຈົດທະບຽນ ແລະ ການປົກປ້ອງສິດຕໍ່ຊັບສິນທາງປັນຍາ.

### ມາດຕາ 32 ການສະໜອງ ແລະ ເຂົ້າເຖິງ ຂໍ້ມູນ ຂ່າວສານ

ຂະແໜງການອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການປະສານສົມທົບກັບຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ສ້າງ ແລະ ພັດທະນາລະບົບຖານຂໍ້ມູນ ຂ່າວສານ ກ່ຽວກັບໂອດອບ ເພື່ອໃຫ້ຜູ້ປະກອບກິດຈະການໂອດອບ ແລະ ສັງຄົມ ໄດ້ເຂົ້າເຖິງສະດວກ, ທົ່ວເຖິງ, ທັນການ. ສໍາລັບຖານຂໍ້ມູນ ໃຫ້ເຊື່ອມຕໍ່ກັບຖານຂໍ້ມູນ ຂ່າວສານ ຂອງກະຊວງອຸດສາຫະກໍາ ແລະ ການຄ້າ.

ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຕ້ອງສະໜອງຂໍ້ມູນ ທີ່ຕິດພັນກັບນະໂຍບາຍ, ລະບຽບການ, ການຜະລິດ, ການຕະຫຼາດ, ການບໍລິການ ແລະ ຂໍ້ມູນອື່ນ ຕາມພາລະບົດບາດຂອງຕົນ ໃຫ້ແກ່ຜູ້ປະກອບກິດຈະການໂອດອບ ດ້ວຍການຈັດກອງປະຊຸມເຜີຍແຜ່, ເຜີຍແຜ່ໃນຮູບແບບເອເລັກໂຕຣນິກ, ປຶ້ມຄູ່ມື, ວາລະສານ, ແຜ່ນພັບໂຄສະນາ ແລະ ສື່ມວນຊົນອື່ນ.

## ໝວດທີ 6
## ຄະນະກຳມະການສົ່ງເສີມໂອດອບ

### ມາດຕາ 33 ຄະນະກຳມະການສົ່ງເສີມໂອດອບ

ຄະນະກຳມະການສົ່ງເສີມໂອດອບ ແມ່ນ ການຈັດຕັ້ງໜຶ່ງທີ່ບໍ່ປະຈຳການ, ມີພາລະບົດບາດ ເປັນເສນາທິການ ໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດວຽກງານໂອດອບ ເປັນທັງຄະນະກຳມະການຄັດເລືອກໂອດອບ ໂດຍມີການປະສານງານກັບ ຂະແໜງການ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

1. ຄະນະກຳມະການສົ່ງເສີມໂອດອບ ປະກອບດ້ວຍ:
2. ຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ;
3. ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ;
4. ຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ.

### ມາດຕາ 34 ຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ

ຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ ຂຽນຫຍໍ້ວ່າ "ຄອສ" ຖືກແຕ່ງຕັ້ງໂດຍ ລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ຕາມການສະເໜີຂອງກົມສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ມີພາລະບົດບາດ ໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດວຽກງານໂອດອບ ໂດຍມີກົມສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ເປັນກອງເລຂາ.

ຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ ປະກອບດ້ວຍ:

1. ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນປະທານ;
2. ຫົວໜ້າກົມສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຮອງປະທານ;
3. ຮອງຫົວໜ້າສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
4. ຜູ້ຕາງໜ້າກະຊວງການເງິນ ເປັນກຳມະການ;
5. ຜູ້ຕາງໜ້າກະຊວງສາທາລະນະສຸກ ເປັນກຳມະການ;
6. ຜູ້ຕາງໜ້າກະຊວງກະສິກຳ ແລະ ສິ່ງແວດລ້ອມ ເປັນກຳມະການ;
7. ຜູ້ຕາງໜ້າກະຊວງວັດທະນະທຳ ແລະ ການທ່ອງທ່ຽວ ເປັນກຳມະການ;
8. ຜູ້ຕາງໜ້າກົມຊັບສິນທາງປັນຍາ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
9. ຜູ້ຕາງໜ້າກົມມາດຕະຖານ ແລະ ວັດແທກ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນກຳມະການ;
10. ຜູ້ຕາງໜ້າສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເປັນກຳມະການ;
11. ຜູ້ຕາງໜ້າຈາກ ກະຊວງ, ອົງການ ທີ່ກ່ຽວຂ້ອງ ເປັນກຳມະການ.

### ມາດຕາ 35 ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ

ຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການຊີ້ນຳ, ຕິດຕາມ ກວດກາ ແລະ ປະເມີນຜົນ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານໂອດອບ ເພື່ອລາຍງານຂັ້ນເທິງ;

2. ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການສ້າງ ແລະ ຮັບຮອງ ແຜນການ, ແຜນງານ ແລະ ໂຄງການໂອດອບ;

3. ຄົ້ນຄວ້າ, ພິຈາລະນາ ຄັດເລືອກ ຮັບຮອງຜະລິດຕະພັນ;

4. ປະສານງານກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານໂອດອບ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 36 ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ**

ກອງເລຂາຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານໂອດອບ;

2. ສັງລວມ ແລະ ສະເໜີ ແຜນການ, ແຜນງານ ແລະ ໂຄງການ ໂອດອບ ຕໍ່ ຄະນະກຳມະການສົ່ງເສີມໂອດອບຂັ້ນສູນກາງ ເພື່ອພິຈາລະນາ;

3. ຊຸກຍູ້, ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານໂອດອບ;

4. ກະກຽມກອງປະຊຸມ ຄະນະກຳມະການສົ່ງເສີມໂອດອບ ຂັ້ນສູນກາງ;

5. ເກັບກຳ, ສັງລວມ ແລະ ຮັກສາຂໍ້ມູນ ກ່ຽວກັບວຽກງານໂອດອບ;

6. ເປັນໃຈກາງປະສານງານກັບ ຂະແໜງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານໂອດອບ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານໂອດອບ ຕໍ່ຄະນະກຳມະການສົ່ງເສີມໂອດອບຂັ້ນສູນກາງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 37 ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ**

ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ ຂຽນຫຍໍ້ວ່າ "ຄອຂ" ຖືກແຕ່ງຕັ້ງໂດຍ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ຕາມການສະເໜີຂອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ, ມີພາລະບົດບາດໃນການນຳພາຈັດຕັ້ງປະຕິບັດວຽກງານສົ່ງເສີມໂອດອບ ໂດຍມີຂະແໜງສົ່ງເສີມການຄ້າ ແລະ ຫັດຖະກຳ, ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ເປັນກອງເລຂາ.

ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ ປະກອບດ້ວຍ:

| | |
|---|---|
| 1. ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ | ເປັນປະທານ; |
| 2. ຮອງຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ | ເປັນຮອງປະທານ; |
| 3. ຫ້ອງວ່າການປົກຄອງ | ເປັນກຳມະການ; |
| 4. ຜູ້ຕາງໜ້າຈາກພະແນກການເງິນ | ເປັນກຳມະການ; |
| 5. ຜູ້ຕາງໜ້າຈາກພະແນກສາທາລະນະສຸກ | ເປັນກຳມະການ; |
| 6. ຜູ້ຕາງໜ້າຈາກພະແນກວັດທະນະທຳ ແລະ ການທ່ອງທ່ຽວ | ເປັນກຳມະການ; |
| 7. ຜູ້ຕາງໜ້າຈາກພະແນກກະສິກຳ ແລະ ສິ່ງແວດລ້ອມ | ເປັນກຳມະການ; |
| 8. ຜູ້ຕາງໜ້າຈາກພະແນກເຕັກໂນໂລຊີ ແລະ ການສື່ສານ | ເປັນກຳມະການ; |
| 9. ຜູ້ຕາງໜ້າຈາກສະພາການຄ້າ ແລະ ອຸດສາຫະກຳ | ເປັນກຳມະການ; |

10.ຫົວໜ້າຂະແໜງສົ່ງເສີມການພັດທະນາສິນຄ້າ ແລະ ການບໍລິການ ເປັນກຳມະການ;

11.ຜູ້ຕາງໜ້າຈາກ ພະແນກການ, ອົງການ ທີ່ກ່ຽວຂ້ອງ ເປັນກຳມະການ.

**ມາດຕາ 38** ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ

ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການຊີ້ນຳ, ຕິດຕາມ ກວດກາ ແລະ ປະເມີນຜົນ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານໂອດອບ ເພື່ອລາຍງານຂັ້ນເທິງ;
2. ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການສ້າງ ແລະ ຮັບຮອງ ແຜນການ, ແຜນງານ ແລະ ໂຄງການໂອດອບ;
3. ຄົ້ນຄວ້າ, ພິຈາລະນາ ຮັບຮອງ ຜະລິດຕະພັນ;
4. ສົ່ງເສີມການຂະຫຍາຍການຜະລິດ ແລະ ການບໍລິການ ແລະ ການເຂົ້າເຖິງຕະຫຼາດຈຳໜ່າຍສິນຄ້າໂອດອບ;
5. ປະສານງານກັບ ພະແນກການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານໂອດອບ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 39** ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ

ກອງເລຂາຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານໂອດອບ;
2. ສັງລວມ ແລະ ສະເໜີ ແຜນການ, ແຜນງານ ແລະ ໂຄງການ ໂອດອບ ຕໍ່ ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ ເພື່ອພິຈາລະນາ;
3. ຊຸກຍູ້, ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານໂອດອບ;
4. ກະກຽມກອງປະຊຸມ ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ;
5. ເກັບກຳ, ສັງລວມ ແລະ ຮັກສາຂໍ້ມູນ ກ່ຽວກັບວຽກງານໂອດອບ;
6. ເປັນໃຈກາງປະສານງານກັບ ພະແນກການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານໂອດອບ;
7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານໂອດອບ ຕໍ່ຄະນະກຳມະການສົ່ງເສີມໂອດອບ ຂັ້ນແຂວງ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 40** ຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ

ຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ ຂຽນຫຍໍ້ວ່າ “ຄອມ” ຖືກແຕ່ງຕັ້ງໂດຍ ເຈົ້າເມືອງ, ເຈົ້ານະຄອນ ຕາມການສະເໜີຂອງຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ, ມີພາລະບົດບາດໃນການນຳພາຈັດຕັ້ງປະຕິບັດວຽກງານສົ່ງເສີມໂອດອບ ໂດຍມີໜ່ວຍງານສົ່ງເສີມການຄ້າ ແລະ ຫັດຖະກຳ, ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ເປັນກອງເລຂາ.

ຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ ປະກອບດ້ວຍ:

1. ຫົວໜ້າຫ້ອງການອຸດສາຫະກຳ ແລະ ການຄ້າ ເປັນປະທານ;
2. ຫ້ອງວ່າການປົກຄອງ ເປັນຮອງປະທານ;

3. ຜູ້ຕາງໜ້າຈາກຫ້ອງການການເງິນ ເປັນກຳມະການ;
4. ຜູ້ຕາງໜ້າຈາກຫ້ອງການສາທາລະນະສຸກ ເປັນກຳມະການ;
5. ຜູ້ຕາງໜ້າຈາກຫ້ອງການວັດທະນະທຳ ແລະ ການທ່ອງທ່ຽວ ເປັນກຳມະການ;
6. ຜູ້ຕາງໜ້າຈາກຫ້ອງການກະສິກຳ ແລະ ສິ່ງແວດລ້ອມ ເປັນກຳມະການ;
7. ຜູ້ຕາງໜ້າຈາກຫ້ອງການເຕັກໂນໂລຊີ ແລະ ການສື່ສານ ເປັນກຳມະການ;
8. ຫົວໜ້າໜ່ວຍງານສົ່ງເສີມການພັດທະນາສິນຄ້າ ແລະ ການບໍລິການ ເປັນກຳມະການ;
9. ຜູ້ຕາງໜ້າຈາກ ຫ້ອງການ, ອົງການ ທີ່ກ່ຽວຂ້ອງ ເປັນກຳມະການ.

**ມາດຕາ 41** ສິດ ແລະ ໜ້າທີ່ ຂອງຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ

ຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ເປັນເຈົ້າການຊີ້ນຳ, ຕິດຕາມ ກວດກາ ແລະ ປະເມີນຜົນ ກ່ຽວກັບ ການຈັດຕັ້ງປະຕິບັດວຽກງານ ໂອດອບ ເພື່ອລາຍງານຂັ້ນເທິງ;

2. ຄົ້ນຄວ້າ, ພິຈາລະນາ ກ່ຽວກັບການສ້າງ ແລະ ຮັບຮອງ ແຜນການ, ແຜນງານ ແລະ ໂຄງການ ໂອດອບ;

3. ຄົ້ນຄວ້າ, ພິຈາລະນາ ຮັບຮອງ ຜະລິດຕະພັນ;

4. ປະສານງານກັບ ຫ້ອງການ, ອົງການປົກຄອງບ້ານ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂອຳນວຍຄວາມສະດວກ ໃນການຈັດຕັ້ງປະຕິບັດວຽກງານໂອດອບ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

**ມາດຕາ 42** ສິດ ແລະ ໜ້າທີ່ ຂອງກອງເລຂາຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ

ກອງເລຂາຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງປະຕິບັດ ແລະ ເຜີຍແຜ່ ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານໂອດອບ;

2. ສັງລວມ ແລະ ສະເໜີ ແຜນການ, ແຜນງານ ແລະ ໂຄງການ ໂອດອບ ຕໍ່ ຄະນະກຳມະການ ສົ່ງເສີມໂອດອບ ຂັ້ນເມືອງ ເພື່ອພິຈາລະນາ;

3. ຊຸກຍູ້, ຕິດຕາມ, ປະເມີນຜົນ ການຈັດຕັ້ງປະຕິບັດ ວຽກງານໂອດອບ;

4. ກະກຽມກອງປະຊຸມ ຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ;

5. ເກັບກຳ, ສັງລວມ ແລະ ຮັກສາຂໍ້ມູນ ກ່ຽວກັບວຽກງານໂອດອບ;

6. ເປັນໃຈກາງປະສານງານກັບ ຫ້ອງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ກ່ຽວກັບວຽກງານໂອດອບ;

7. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານໂອດອບ ຕໍ່ຄະນະກຳມະການສົ່ງເສີມໂອດອບ ຂັ້ນເມືອງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 7
## ກອງທຶນສົ່ງເສີມໂອດອບ

**ມາດຕາ 43** ກອງທຶນສົ່ງເສີມໂອດອບ

ກອງທຶນສົ່ງເສີມໂອດອບ ແມ່ນ ກອງທຶນຂອງລັດ ທີ່ສ້າງຕັ້ງຂຶ້ນ ເພື່ອສະສົມທຶນ ແລະ ລະດົມທຶນຈາກແຫຼ່ງທຶນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ແນໃສ່ສະສົມທຶນໃຫ້ພຽງພໍ ໃນການຕອບສະໜອງເຂົ້າໃນການ

ສົ່ງເສີມໂອດອບ ໃຫ້ມີປະສິດທິພາບ, ປະສິດທິຜົນ ໂດຍຢູ່ພາຍໃຕ້ການຄຸ້ມຄອງ ແລະ ຕິດຕາມ ກວດກາ ຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອົງການປົກຄອງ ຂັ້ນແຂວງ.

ກອງທຶນສົ່ງເສີມໂອດອບ ຂຽນຫຍໍ້ວ່າ "ກສອ"

ກອງທຶນສົ່ງເສີມໂອດອບ ມີ ສອງ ຂັ້ນ ຄື ຂັ້ນສູນກາງ ແລະ ຂັ້ນແຂວງ.

ມາດຕາ 44 ແຫຼ່ງທຶນຂອງກອງທຶນສົ່ງເສີມໂອດອບ

ກອງທຶນສົ່ງເສີມໂອດອບ ໄດ້ມາຈາກແຫຼ່ງທຶນ ດັ່ງນີ້:

1. ການປະກອບທຶນຂອງລັດ;
2. ການປະກອບສ່ວນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ດ້ວຍຄວາມສະໝັກໃຈ;
3. ການລະດົມທຶນຈາກ ທັງພາຍໃນ ແລະ ຕ່າງປະເທດ;
4. ການຈັດກິດຈະກຳອື່ນ;
5. ແຫຼ່ງທຶນອື່ນ ທີ່ຖືກຕ້ອງຕາມກົດໝາຍ.

ມາດຕາ 45 ການຄຸ້ມຄອງ ແລະ ການນຳໃຊ້ກອງທຶນສົ່ງເສີມໂອດອບ

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນສົ່ງເສີມໂອດອບ ຕ້ອງຮັບປະກັນຄວາມໂປ່ງໃສ, ສາມາດກວດສອບໄດ້ ໂດຍສອດຄ່ອງກັບ ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ກົດໝາຍອື່ນ ທີ່ກ່ຽວຂ້ອງ.

ສຳລັບລາຍລະອຽດກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ກອງທຶນສົ່ງເສີມໂອດອບ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 8
## ຂໍ້ຫ້າມ

ມາດຕາ 46 ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ຂັດຂວາງ, ເມີນເສີຍ ແລະ ບໍ່ໃຫ້ຄວາມຮ່ວມມື ການປະຕິບັດ ສິດ ແລະ ໜ້າທີ່ ຂອງພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ລວມທັງຜູ້ປະກອບກິດຈະການໂອດອບ;
2. ປອມແປງເອກະສານ ຫຼື ນຳໃຊ້ເອກະສານປອມ ກ່ຽວກັບໂອດອບ;
3. ນຳໃຊ້ກາໝາຍໂອດອບ ຕິດໃສ່ຜະລິດຕະພັນ ໂດຍບໍ່ໄດ້ຮັບອະນຸຍາດ;
4. ແອບອ້າງ, ໂຄສະນາ ຜະລິດຕະພັນຂອງຕົນ ເປັນຜະລິດຕະພັນໂອດອບ;
5. ເປັນສື່ກາງໃນການ ໃຫ້, ຮັບ ສິນບົນ ຫຼື ຜົນປະໂຫຍດອື່ນ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 47 ຂໍ້ຫ້າມສຳລັບຜູ້ປະກອບກິດຈະການໂອດອບ

ຫ້າມ ຜູ້ປະກອບກິດຈະການໂອດອບ ມີ ພຶດຕິກຳ ດັ່ງນີ້:

1. ດຳເນີນກິດຈະການໂອດອບ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ ຫຼື ການອະນຸຍາດ;
2. ນາບຂູ່, ໃຊ້ ຄວາມຮຸນແຮງ ແລະ ວາຈາທີ່ບໍ່ເໝາະສົມ ຕໍ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ນຳໃຊ້ກາໝາຍໂອດອບ ໂດຍບໍ່ໄດ້ຮັບອະນຸຍາດ;

4. ສະໜອງຂໍ້ມູນກ່ຽວກັບຜະລິດຕະພັນ ທີ່ບໍ່ຖືກຕ້ອງຕາມຄວາມຈິງ ຕໍ່ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

5. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນ ແກ່ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;

6. ໂອນ ຫຼື ມອບກາໝາຍໂອດອບ ໃຫ້ຜູ້ອື່ນນຳໃຊ້;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 48 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດ ສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;

2. ຂໍເອົາ, ທວງເອົາ ຫຼື ຮັບ, ເປັນສື່ກາງ ໃນການໃຫ້ ຫຼື ຮັບ ສິນບົນ;

3. ປະຕິບັດໜ້າທີ່ ດ້ວຍຄວາມປະໝາດ, ເລີ່ນເລີ້, ຂາດຄວາມຮັບຜິດຊອບ;

4. ກົດໜ່ວງ, ຖ່ວງດຶງ, ປອມແປງເອກະສານ, ອອກເອກະສານ ຫຼື ທຳລາຍເອກະສານ ໂດຍບໍ່ຖືກຕ້ອງ;

5. ເກັບ ຄ່າທຳນຽມ ແລະ ຄ່າບໍລິການ ບໍ່ຖືກຕ້ອງຕາມລະບຽບການ;

6. ນຳໃຊ້ລາຍຮັບວິຊາການ ໂດຍບໍ່ໄດ້ຮັບອະນຸຍາດ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 9
## ການຄຸ້ມຄອງ ແລະ ກວດກາ ວຽກງານໂອດອບ

ມາດຕາ 49 ການຄຸ້ມຄອງ ແລະ ກວດກາ ວຽກງານໂອດອບ

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄຸ້ມຄອງ ແລະ ກວດກາ ວຽກງານໂອດອບ ໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານໂອດອບ ປະກອບດ້ວຍ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;

2. ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ;

3. ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ;

ມາດຕາ 50 ສິດ ແລະ ໜ້າທີ່ ຂອງກະຊວງອຸດສາຫະກຳ ແລະ ການຄ້າ

ກະຊວງອຸດສາຫະກຳ ແລະ ການຄ້າ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ສ້າງ ນະໂຍບາຍ ແລະ ລະບຽບການ ກ່ຽວກັບວຽກງານໂອດອບ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ ແລະ ລະບຽບການ ກ່ຽວກັບວຽກງານໂອດອບ ເປັນ ແຜນການ, ແຜນງານ, ໂຄງການ ຂອງຕົນ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບ ວຽກງານໂອດອບ;

4. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານໂອດອບ;

5. ອອກ, ໂຈະ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບ ວຽກງານໂອດອບ;

6. ພິຈາລະຈາ ອອກໃບອະນຸຍາດນຳໃຊ້ກາໝາຍໂອດອບ ແລະ ປະດັບດາວ;

7. ສົ່ງເສີມ ການຂະຫຍາຍການຜະລິດ ແລະ ການບໍລິການ ແລະ ການເຂົ້າເຖິງຕະຫຼາດຈຳໜ່າຍສິນຄ້າໂອດອບ;

8. ຄຸ້ມຄອງກອງທຶນສົ່ງເສີມໂອດອບ ຂັ້ນສູນກາງ;

9. ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານໂອດອບ;

10. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານ ໂອດອບ;

11. ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານໂອດອບ;

12. ພົວພັນ ແລະ ຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານໂອດອບ;

13. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໂອດອບ ຕໍ່ ລັດຖະບານ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 51** ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ

ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານໂອດອບ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານໂອດອບ;

3. ຊີ້ນຳ, ຄຸ້ມຄອງ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານໂອດອບ;

4. ອອກ, ໂຈະ ຫຼື ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານໂອດອບ;

5. ພິຈາລະຈາ ອອກໃບຢັ້ງຢືນຮັບຮອງຜະລິດຕະພັນ ແລະ ປະດັບດາວ;

6. ສົ່ງເສີມ ການຂະຫຍາຍການຜະລິດ ແລະ ການບໍລິການ ແລະ ການເຂົ້າເຖິງຕະຫຼາດຈຳໜ່າຍສິນຄ້າໂອດອບ;

7. ຄຸ້ມຄອງກອງທຶນສົ່ງເສີມໂອດອບ ຂັ້ນແຂວງ;

8. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານໂອດອບ;

9. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານໂອດອບ;

10. ປະສານສົມທົບກັບ ພະແນກ, ອົງການ ຂັ້ນແຂວງ, ອົງການປົກຄອງ ຂັ້ນເມືອງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານໂອດອບ;

11. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໂອດອບ ຕໍ່ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ຂັ້ນເມືອງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານໂອດອບ;
2. ເຜີຍແຜ່ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານໂອດອບ;
3. ຄຸ້ມຄອງ, ຊຸກຍູ້, ຕິດຕາມ ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ນະໂຍບາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານໂອດອບ;
4. ອອກ, ໂຈະ ຫຼື ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານໂອດອບ;
5. ພິຈາລະຈາ ອອກໃບຢັ້ງຢືນຮັບຮອງຜະລິດຕະພັນ ແລະ ປະດັບດາວ;
6. ສະເໜີ ສ້າງ, ບຳລຸງ, ຍົກລະດັບ ບຸກຄະລາກອນ ກ່ຽວກັບວຽກງານໂອດອບ;
7. ຮັບ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານໂອດອບ;
8. ປະສານສົມທົບກັບ ຫ້ອງການ, ອົງການ ຂັ້ນເມືອງ, ຕາແສງ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານໂອດອບ;
9. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານໂອດອບ ຕໍ່ພະແນກອຸດສາຫະກຳ ແລະ ການຄ້າ ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;
10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 53 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີ ສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ວຽກງານໂອດອບ ໃນການຄຸ້ມຄອງ ແລະ ກວດກາ ວຽກງານດັ່ງກ່າວ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 54 ເນື້ອໃນການກວດກາ**

ການກວດກາ ວຽກງານໂອດອບ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານໂອດອບ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
3. ການເຄື່ອນໄຫວ ແລະ ການດຳເນີນກິດຈະການ ຂອງຜູ້ປະກອບກິດຈະການໂອດອບ;
4. ການສ້າງ ແລະ ປະຕິບັດແຜນການ ກ່ຽວກັບວຽກງານໂອດອບ;
5. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 55 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;
2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ໃນການດຳເນີນການກວດກາວຽກງານໂອດອບ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 10
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 56 ນະໂຍບາຍຕໍ່ຜູ້ທີ່ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການເປັນແບບຢ່າງ, ການປະກອບສ່ວນຢ່າງຕັ້ງໜ້າ ໃນການຈັດຕັ້ງປະຕິບັດວຽກງານໂອດອບ ຖືກຕ້ອງ, ມີປະສິດທິພາບ ແລະ ປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 57 ມາດຕະການຕໍ່ຜູ້ທີ່ລະເມີດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນ ຫຼື ລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 11
## ບົດບັນຍັດສຸດທ້າຍ

**ມາດຕາ 58 ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 59 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 18 ພະຈິກ 2025 ເປັນຕົ້ນໄປ.

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ